**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ນາຍົກລັດຖະມົນຕີ**

ເລກທີ 31. /ນຍ

ນະຄອນຫຼວງວຽງຈັນ, ວັນທີ 02.04.2020.

# ຂໍ້ຕົກລົງ
## ວ່າດ້ວຍການກຳນົດນະໂຍບາຍ ແລະ ມາດຕະການ ເພື່ອຫຼຸດຜ່ອນຜົນກະທົບຈາກການລະບາດ ຂອງພະຍາດ COVID-19 ຕໍ່ເສດຖະກິດ ຂອງລາວ.

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ (ສະບັບປັບປຸງ) ເລກທີ 04/ສພຊ, ລົງວັນທີ 8 ພະຈິກ 2016.
- ອີງຕາມກົດໝາຍວ່າດ້ວຍ ການຄຸ້ມຄອງສ່ວຍສາອາກອນ (ສະບັບປັບປຸງ) ເລກທີ 66/ສພຊ, ລົງວັນທີ 17 ມິຖຸນາ 2019.
- ອີງຕາມກົດໝາຍວ່າ ດ້ວຍອາກອນລາຍໄດ້ ສະບັບເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019.
- ອີງຕາມກົດໝາຍວ່າ ດ້ວຍພາສີ (ສະບັບປັບປຸງ) ເລກທີ 04/ນຍ, ລົງວັນທີ 20 ທັນວາ 2011.
- ອີງຕາມກົດໝາຍວ່າດ້ວຍ ທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018.
- ອີງຕາມການເຫັນດີເປັນເອກະພາບ ຂອງກອງປະຊຸມລັດຖະບານ ສະໄໝສາມັນ ຄັ້ງວັນທີ 19-20 ມີນາ 2020.
- ອີງຕາມຄຳສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ຄັ້ງວັນທີ 29 ມີນາ 2020 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 (COVID-19).

### ນາຍົກລັດຖະມົນຕີ ຕົກລົງ:

**ມາດຕາ 01:** ເຫັນດີປະຕິບັດນະໂຍບາຍ ແລະ ມາດຕະການ ເພື່ອຫຼຸດຜ່ອນຜົນກະທົບຈາກການລະບາດ ຂອງພະຍາດ COVID-19 ຕໍ່ເສດຖະກິດ ຂອງລາວ ດັ່ງນີ້:

**1.1. ດ້ານນະໂຍບາຍ:**

1) ໃຫ້ປະຕິບັດນະໂຍບາຍຍົກເວັ້ນການເກັບອາກອນລາຍໄດ້ຈາກເງິນເດືອນ ຂອງຜູ້ອອກແຮງງານທັງໝົດທັງພາກລັດ ແລະ ເອກະຊົນ ທີ່ມີລາຍຮັບ 5 ລ້ານກີບ ລົງມາ ໃນໄລຍະເວລາ 3 ເດືອນ (ເດືອນເມສາ, ພຶດສະພາ ແລະ ມິຖຸນາ 2020);
2) ໃຫ້ປະຕິບັດນະໂຍບາຍຍົກເວັ້ນການເກັບອາກອນລາຍໄດ້ ຂອງຈຸນລະວິສາຫະກິດ ຕາມທີ່ກຳນົດໄວ້ໃນມາດຕາ 29 ຂໍ້ທີ 2 ຂອງກົດໝາຍວ່າດ້ວຍອາກອນລາຍໄດ້ ສະບັບເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019 ເປັນໄລຍະເວລາ 3 ເດືອນ (ເດືອນເມສາ, ພຶດສະພາ ແລະ ມິຖຸນາ 2020);
3) ໃຫ້ຍົກເວັ້ນພາສີ-ອາກອນ ແລະ ຄ່າທຳນຽມຕ່າງໆ ໃນການນຳເຂົ້າທຸກປະເພດສິນຄ້າ ທີ່ນຳໃຊ້ເຂົ້າໃນວຽກງານສະກັດກັ້ນ, ກັນການລະບາດ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19 ເຊັ່ນ: ຜ້າປິດປາກ-ດັງ, ນ້ຳຢາລ້າງມື, ເຄື່ອງອຸປະກອນການແພດ ແລະ ອື່ນໆ ທີ່ຈຳເປັນ. ມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ສົມທົບກັບກະຊວງ ສາທາລະນະສຸກ ເຮັດບັນຊີລາຍການສິນຄ້າ ທີ່ຕ້ອງການນຳເຂົ້າໂດຍຍົກເວັ້ນພາສີ-ອາກອນ ແລະ ຄ່າທຳນຽມຕ່າງໆ ໃຫ້ລະອຽດ, ແລ້ວສົ່ງໃຫ້ກະຊວງການເງິນເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ;
4) ໃຫ້ເລື່ອນການຊຳລະພັນທະອາກອນ ຂອງຜູ້ປະກອບການທຸລະກິດບໍລິການທ່ອງທ່ຽວ ເປັນໄລຍະເວລາ 3 ເດືອນ ເລີ່ມແຕ່ເດືອນເມສາ 2020 ເປັນຕົ້ນໄປ. ມອບໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ

ທ້ອງຖິ່ນ ເປັນໃຈກາງສົມທົບກັບພາກສ່ວນກ່ຽວຂ້ອງ ກຳນົດບັນຊີປະເພດທຸລະກິດ ທີ່ຈະໄດ້ຮັບການເລື່ອນຊຳລະດັ່ງກ່າວໃຫ້ລະອຽດຕື່ມ;

5) ໃຫ້ຕໍ່ເວລາການສົ່ງເອກະສານລາຍງານການເງິນ ແລະ ຜົນການເຄື່ອນໄຫວວຽກງານປະຈຳປີ 2019 ຂອງວິສາຫະກິດ ຈາກ 31 ມີນາ 2020 ໄປເປັນ 30 ເມສາ 2020;
6) ໃຫ້ຕໍ່ເວລາການຊຳລະຄ່າທຳນຽມທາງ ຈາກວັນທີ 31 ມີນາ 2020 ມາເປັນ ວັນທີ 30 ມິຖຸນາ 2020;
7) ໃຫ້ຄົ້ນຄວ້າຜ່ອນຜັນລາຄາ ແລະ ຕໍ່ເວລາ ໃນການຊຳລະຄ່າໄຟຟ້າ ແລະ ນ້ຳປະປາ ຂອງຜູ້ຊົມໃຊ້ຄົວເຮືອນ ແລະ ພາກທຸລະກິດ;
8) ເຫັນດີໃຫ້ທະນາຄານແຫ່ງ ສປປ ລາວ ປະຕິບັດການປັບຫຼຸດອັດຕາດອກເບ້ຍພື້ນຖານຂອງທະນາຄານແຫ່ງ ສປປ ລາວ ແລະ ຫຼຸດອັດຕາສ່ວນເງິນແຮຝາກບັງຄັບຂອງທະນາຄານທຸລະກິດລົງ ຕາມຄວາມເໝາະສົມໃນແຕ່ລະໄລຍະ;
9) ເຫັນດີໃຫ້ທະນາຄານແຫ່ງ ສປປ ລາວ ກຳນົດໃຫ້ບັນດາທະນາຄານທຸລະກິດ ປະຕິບັດນະໂຍບາຍສິນເຊື່ອເພື່ອແກ້ໄຂຜົນກະທົບຈາກການລະບາດຂອງພະຍາດ COVID-19 ເປັນຕົ້ນ: ນະໂຍບາຍເລື່ອນເວລາຊຳລະໜີ້ຕົ້ນທຶນ ແລະ ດອກເບ້ຍ, ປັບຫຼຸດອັດຕາດອກເບ້ຍ, ສະໜອງເງິນກູ້ບ້ວງໃໝ່ໃຫ້ບັນດາຫົວໜ່ວຍທຸລະກິດ, ການປັບໂຄງສ້າງໜີ້, ການຈັດຊັ້ນໜີ້ ແລະ ອື່ນໆ ຕາມທີ່ໄດ້ກຳນົດໃນຂໍ້ຕົກລົງ ສະບັບເລກທີ 238/ທຫລ, ລົງວັນທີ 26 ມີນາ 2020;
10) ໃຫ້ເລື່ອນເວລາການຊຳລະພັນທະການປະກອບສ່ວນປະກັນສັງຄົມແບບບັງຄັບ ຂອງຫົວໜ່ວຍທຸລະກິດທີ່ໄດ້ຮັບຜົນກະທົບ ເປັນໄລຍະເວລາ 3 ເດືອນ (ເດືອນເມສາ, ພຶດສະພາ ແລະ ມິຖຸນາ 2020).

**1.2 ດ້ານມາດຕະການ:**

1) ໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນໃຈກາງສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສືບຕໍ່ຄົ້ນຄວ້າການດັດປັບຕົວເລກການຂະຫຍາຍຕົວ GDP ແລະ ຕົວເລກຄາດໝາຍເສດຖະກິດມະຫາພາກທີ່ສຳຄັນໃນປີ 2020 ໃຫ້ສອດຄ່ອງຕາມຕົວຈິງ ແລະ ສືບຕໍ່ຄົ້ນຄວ້າ ແລະ ຕີລາຄາຜົນກະທົບຕື່ມ ແຕ່ນີ້ຮອດກອງປະຊຸມສະໄໝສາມັນ ເທື່ອທີ 9 ຂອງສະພາແຫ່ງຊາດຊຸດທີ VIII;
2) ໃຫ້ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ກະຊວງອຸດສາຫະກຳ ແລະ ການຄ້າ, ທະນາຄານແຫ່ງ ສປປ ລາວ ແລະ ພາກສ່ວນກ່ຽວຂ້ອງ ເພີ່ມທະວີໃນການຄຸ້ມຄອງສະຖຽນລະພາບເສດຖະກິດມະຫາພາກໃຫ້ຮັດກຸມ ເປັນຕົ້ນແມ່ນ ການຄຸ້ມຄອງລາຄາສິນຄ້າ, ຄຸ້ມຄອງອັດຕາແລກປ່ຽນ, ການເກັບລາຍຮັບ ແລະ ການແກ້ໄຂໜີ້ສິນ, ຊຸກຍູ້ບັນດາໂຄງການລົງທຶນຂະໜາດໃຫຍ່ໃຫ້ດຳເນີນການໄປຕາມແຜນທີ່ວາງໄວ້ ທັງອຳນວຍຄວາມສະດວກ ເພື່ອດຶງດູດການລົງທຶນ ຂອງພາກເອກະຊົນ ໃຫ້ນັບມື້ເພີ່ມຂຶ້ນ;
3) ໃຫ້ກະຊວງການເງິນ, ບັນດາກະຊວງທີ່ມີຫົວໜ່ວຍລາຍຮັບ ແລະ ອົງການປົກຄອງທ້ອງຖິ່ນ ເອົາໃຈໃສ່ການເກັບລາຍຮັບ ໃຫ້ໄດ້ຫຼາຍເທົ່າທີ່ມີແຫຼ່ງຈະເກັບໄດ້ ໂດຍເລັ່ງຈັດເກັບໃນທຸລະກິດທີ່ມີທ່າແຮງ ແລະ ບໍ່ຖືກຜົນກະທົບໂດຍກົງຈາກ COVID-19;
4) ໃຫ້ກະຊວງການເງິນ, ບັນດາກະຊວງທີ່ມີຫົວໜ່ວຍລາຍຮັບ ແລະ ອົງການປົກຄອງທ້ອງຖິ່ນ ຄຸ້ມຄອງດ້ານລາຍຈ່າຍງົບປະມານ ຢ່າງຮັດກຸມ ແລະ ປົນຈິດໃຈປະຢັດ ໂດຍໃຫ້ຫຼຸດຜ່ອນລາຍຈ່າຍບໍລິຫານປົກກະຕິ ແລະ ດັດສົມສົ່ງເສີມ ຂອງບັນດາກະຊວງ,ອົງການຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ມີເງື່ອນໄຂ ຢ່າງໜ້ອຍ 10% ຂອງແຜນປີ. ພ້ອມກັນນັ້ນ ກໍໃຫ້ເລືອກເຟັ້ນຫຼຸດຜ່ອນບາງລາຍຈ່າຍຕື່ມອີກ ເປັນຕົ້ນ: ລາຍຈ່າຍການຈັດກອງປະຊຸມສຳມະນາ, ລາຍຈ່າຍຮັບແຂກຕ່າງປະເທດ, ລາຍຈ່າຍກອງທຶນຄົ້ນຄວ້າວິທະຍາສາດ, ລາຍຈ່າຍການປຸກສ້າງ, ລາຍຈ່າຍສະເຫຼີມສະຫຼອງວັນສຳຄັນຕ່າງໆຂອງພັກ-ຂອງຊາດ, ລາຍຈ່າຍຊື້ຊັບສົມບັດຄົງທີ່ ແລະ ລາຍຈ່າຍອື່ນໆ. ເງິນທີ່ໄດ້ຈາກການປະຢັດນັ້ນ, ໃຫ້ເອົາມາເພີ່ມເຂົ້າບ້ວງເງິນແຮລັດຖະບານ ເພື່ອຮອງຮັບການສະກັດກັ້ນ COVID-19. ສຳລັບບັນດາໂຄງການລົງທຶນໃໝ່ຂອງລັດ ໃນປີ 2020 ທີ່ສະພາຮອງຮັບແລ້ວ (ສະເພາະໂຄງການກໍ່ສ້າງພື້ນຖານໂຄງລ່າງ) ແມ່ນໃຫ້

ເລື່ອນໄປຈ່າຍ ໃນປີ 2021. ສືບຕໍ່ກວດກາໂຄງການລົງທຶນລັດທີ່ມີມູນຄ່າສູງເກີນຄວາມເປັນຈິງ ແລະ ບໍ່ມີປະສິດທິຜົນເພື່ອສະເໜີໂຈະ ຫຼື ຫຼຸດມູນຄ່າລົງ;

5) ໃຫ້ຮີບຮ້ອນຄົ້ນຄວ້າມາດຕະການຊຸກຍູ້ສົ່ງເສີມການຜະລິດເປັນສິນຄ້າ ໂດຍສະເພາະແມ່ນເລັ່ງການປະຕິບັດກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ-ກາງ (SME) ໃຫ້ເປັນຮູບປະທໍາໂດຍໄວ;

6) ໃຫ້ຄົ້ນຄວ້າອອກບົດແນະນໍາໃນການປັບປຸງ ແລະ ສ້າງພື້ນຖານການທ່ອງທ່ຽວ ເພື່ອຮອງຮັບການທ່ອງທ່ຽວ ພາຍຫຼັງການລະບາດ COVID-19 ສາມາດຄວບຄຸມໄດ້ແລ້ວ, ໃຫ້ເລັ່ງສົ່ງເສີມການທ່ອງທ່ຽວພາຍໃນຫຼາຍຂຶ້ນ ແລະ ກຽມພ້ອມສ້າງຄວາມດຶງດູດນັກທ່ອງທ່ຽວຕ່າງປະເທດໃນລະດູການທ່ອງທ່ຽວ 3 ເດືອນທ້າຍປີ 2020. ພ້ອມກັນນັ້ນ, ກໍໃຫ້ເພີ່ມທະວີການໂຄສະນາເຜີຍແຜ່ ໃຫ້ທຸກພາກສ່ວນທົ່ວສັງຄົມເຂົ້າໃຈຕໍ່ສະພາບຜົນກະທົບ ແລະ ຮ່ວມໃຈກັນແກ້ໄຂບັນຫາ;

7) ໃຫ້ກະກຽມການຜະລິດ ແລະ ເຈລະຈາກັບບໍລິສັດທີ່ສັ່ງຊື້ແຮ່ທາດຈາກ ສປ ຈີນ ແລະ ປະເທດອື່ນໆ ເພື່ອກຽມພ້ອມສະໜອງແຮ່ທາດ ໃນເວລາທີ່ປະເທດຄູ່ຄ້າ ປະກາດເລັ່ງການຜະລິດອຸດສາຫະກໍາຄືນ. ພ້ອມນັ້ນກໍລະດົມໃຫ້ບໍລິສັດ ສືບຕໍ່ມອບພັນທະຕ່າງໆ ຕໍ່ລັດຖະບານ;

8) ໃຫ້ເອົາໃຈໃສ່ຕິດຕາມ, ກວດກາສຸຂະພາບ ແລະ ຄຸ້ມຄອງແຮງງານລາວ ທີ່ມາຈາກຕ່າງປະເທດ ເພື່ອໃຫ້ເຂົາເຈົ້າໄດ້ເຂົ້າສູ່ລະບົບການກັກກັນຕົວເອງໃນໄລຍະ 14 ວັນ ແລະ ອອກໃບຢັ້ງຢືນໃຫ້ແຮງງານທີ່ຜ່ານການຕິດຕາມ ແລະ ກວດສຸຂະພາບແລ້ວ ໃຫ້ສາມາດກັບມາປະຕິບັດໜ້າທີ່ໄດ້;

9) ໃຫ້ສຸມໃສ່ຄົ້ນຄວ້າ ແລະ ປັບປຸງການດໍາເນີນທຸລະກິດ ຂອງລັດວິສາຫະກິດການບິນລາວ ເພື່ອກຽມຄວາມພ້ອມໃຫ້ແກ່ການດໍາເນີນທຸລະກິດ ພາຍຫຼັງການລະບາດຂອງພະຍາດຜ່ອນຄາຍລົງ.

**ມາດຕາ 02: ການຈັດຕັ້ງປະຕິບັດ**:

2.1 ໃຫ້ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ, ກະຊວງກະສິກໍາ ແລະ ປ່າໄມ້, ກະຊວງອຸດສາຫະກໍາ ແລະ ການຄ້າ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງການຕ່າງປະເທດ, ກະຊວງສາທາລະນະສຸກ ແລະ ພາກສ່ວນກ່ຽວຂ້ອງ ອອກນິຕິກໍາແນະນໍາ ໃນການຈັດຕັ້ງປະຕິບັດຕົວຈິງໃຫ້ລະອຽດຕື່ມ ຕາມບົດບາດ, ໜ້າທີ່ ແລະ ສິດ ຂອງຂະແໜງການຕົນ;

2.2 ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນໃຈກາງສົມທົບກັບກະຊວງການເງິນ, ກະຊວງອຸດສາຫະກໍາ ແລະ ການຄ້າ, ທະນາຄານແຫ່ງ ສປປ ລາວ ແລະ ພາກສ່ວນກ່ຽວຂ້ອງ ຊຸກຍູ້, ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ມາດຕະການ ທີ່ກໍານົດໃນຂໍ້ຕົກລົງສະບັບນີ້ ໃຫ້ເປັນຮູບປະທໍາ, ໂປ່ງໃສ ແລະ ສາມາດກວດສອບໄດ້ ແລ້ວສະຫຼຸບລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດໃຫ້ທ່ານ ນາຍົກລັດຖະມົນຕີ ຊາບເປັນປົກກະຕິ;

2.3 ໃນການຈັດຕັ້ງປະຕິບັດຕົວຈິງ, ຖ້າຫາກວ່ານະໂຍບາຍ ແລະ ມາດຕະການໃດ ບໍ່ສອດຄ່ອງກັບສະພາບຕົວຈິງ ແມ່ນໃຫ້ກະຊວງແຜນການ ແລະ ການລົງທຶນ ສົມທົບກັບພາກສ່ວນກ່ຽວຂ້ອງຄົ້ນຄວ້າປັບປຸງເປັນແຕ່ລະໄລຍະ.

**ມາດຕາ 03:** ບັນດາກະຊວງ, ອົງການຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມື ເພື່ອຈັດຕັ້ງປະຕິບັດ ຕາມຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 04:** ຂໍ້ຕົກລົງ ສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ